ບົດລາຍງານ

ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ປະຈຳປີ 2023

ໂດຍ: ຕະຫຼາດຫຼັກຊັບລາວ

ສາລະບານ

1. ຂໍ້ມູນກ່ຽວກັບ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ 1

1.1. ຂໍ້ມູນທົ່ວໄປ 1

1.2. ຂໍ້ມູນທາງການເງິນ 1

1.3. ຂໍ້ມູນສະພາບໍລິຫານ 1

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ 2

1.5. ຂໍ້ມູນຄະນະອຳນວຍການ 2

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG 2

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ 2

2.1. ຜົນການປະເມີນຄະແນນຕົວຈິງ 2

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ 3

3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ 4

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 4

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ 5

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 5

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 7

4. ສິ່ງທີ່ຕ້ອງໄດ້ປັບປຸງ 8

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ 8

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ 9

1. ຂໍ້ມູນກ່ຽວກັບ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

1.1. ຂໍ້ມູນທົ່ວໄປ

ຫົວຂໍ້	ລາຍລະອຽດ
ຊື່ບໍລິສັດ:	ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ)
ທີ່ຕັ້ງສຳນັກງານ:	ບ້ານ ໜອງຈັນ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ
ເບີໂທລະສັບ:	021 288299
ປະເພດທຸລະກິດ:	ສູນການຄ້າ
ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ:	31/05/2019
ເວັບໄຊ:	www.vclao.com
ຈຳນວນພະນັກງານ:	17 ຄົນ
ຈຳນວນຮຸ້ນຈົດທະບຽນ:	147.199.900 ຮຸ້ນ
ລາຄາຕະຫຼາດ (30/12/2022):	1.080 ກີບ/ຮຸ້ນ
ມູນຄ່າຕະຫຼາດ (30/12/2022):	158.976 ລ້ານກີບ

1.2. ຂໍ້ມູນທາງການເງິນ

ຕົວເລກຂໍ້ມູນການເງິນ (31 ທັນວາ 2022)	
ຊັບສິນ: 296.294 ລ້ານກີບ	ລາຍຮັບ: 103.832 ລ້ານກີບ
ໜີ້ສິນ: 38.037 ລ້ານກີບ	ລາຍຈ່າຍ: 25.397 ລ້ານກີບ
ທຶນ: 296.294 ລ້ານກີບ	ກຳໄລສຸດທິ: 78.435 ລ້ານກີບ

1.3. ຂໍ້ມູນສະພາບໍລິຫານ

ສະພາບໍລິຫານຂອງ ບໍລິສັດ ວຈຊຕ ປະກອບມີສະມາຊິກສະພາບໍລິຫານທັງໝົດ 11 ທ່ານ ຊຶ່ງມີລາຍຊື່ ດັ່ງນີ້:

1.	ທ່ານ ເຮີ ຈຸ້ນ	ປະທານ
2.	ທ່ານ ນາງ ອໍລະໄທ ສັນຕິຄົງຄາ	ຮອງປະທານ
3.	ທ່ານ ບຸລະພາ ສັນຕິຄົງຄາ	ສະມາຊິກ
4.	ທ່ານ ຫວັ່ງ ເຫວີຍຄຸນ	ສະມາຊິກ
5.	ທ່ານ ອຸ ຊິງຫວາ	ສະມາຊິກ
6.	ທ່ານ ເຫຼີຍ ເຢົ້າ	ສະມາຊິກ
7.	ທ່ານ ຫຼໍ ສ້ຽວດິ່ງ	ສະມາຊິກ
8.	ທ່ານ ສ່ຽວ ໂຢງ	ສະມາຊິກອິດສະຫຼະ
9.	ທ່ານ ຈ່າງ ທຽນອີ້	ສະມາຊິກອິດສະຫຼະ
10.	ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກອິດສະຫຼະ
11.	ທ່ານ ຈໍຊິ່ງ ບົວສີເນັ່ງມາ	ສະມາຊິກອິດສະຫຼະ

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ບໍລິສັດ ວຈຊຕ ປະກອບດ້ວຍ 4 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການປະກອບດ້ວຍສະມາຊິກ ດັ່ງນີ້:

1) ຄະນະກຳມະການກວດສອບ

1. ທ່ານ ເຮີ ຈຸ້ນ	ປະທານ
2. ທ່ານ ຈ່າງ ທຽນອີ	ສະມາຊິກອິດສະຫຼະ
3. ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກອິດສະຫຼະ

2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ

1. ທ່ານ ຫຼໍ ສ້ຽວດິ່ງ	ປະທານ
2. ທ່ານ ຈໍຊິ່ງ ບິວສິເນ້ັ່ງມາ	ສະມາຊິກອິດສະຫຼະ
3. ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກອິດສະຫຼະ

3) ຄະນະກຳມະການກຳນົດຄ່າຕອບແທນ

1. ທ່ານ ອຸ ຊິງຫວາ	ປະທານ
2. ທ່ານ ສ່ຽວ ໂຢງ	ສະມາຊິກອິດສະຫຼະ
3. ທ່ານ ຈໍຊິ່ງ ບິວສິເນ້ັ່ງມາ	ສະມາຊິກອິດສະຫຼະ

4) ຄະນະກຳມະການຄັດເລືອກ

1. ທ່ານ ບຸລະພາ ສັນຕິຄົງຄາ	ປະທານ
2. ທ່ານ ຈ່າງ ທຽນອີ	ສະມາຊິກອິດສະຫຼະ
3. ທ່ານ ຈໍຊິ່ງ ບິວສິເນ້ັ່ງມາ	ສະມາຊິກອິດສະຫຼະ

1.5. ຂໍ້ມູນຄະນະອຳນວຍການ

1. ທ່ານ ຫວັ່ງ ເຫວີຍຄຸນ	ຜູ້ອຳນວຍການໃຫຍ່
2. ທ່ານ ຫຼໍ ສ້ຽວດິ່ງ	ຮອງຜູ້ອຳນວຍໃຫຍ່ຝ່າຍການເງິນ
3. ທ່ານ ອຸ ຊິງຫວາ	ຮອງຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

ຊື່ ແລະ ນາມສະກຸນ	ເບີໂທ	ອີເມລ
ທ່ານ ເໜີ່ຍ ເຢົ້າຫາຍ ຕຳແໜ່ງ ເລຂານຸການ ສະພາບໍລິຫານ	020-95549597	yhlei@vclao.com

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

2.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຕົວຈິງ ຂອງ ບໍລິສັດ ວຈຊຕ ປະຈຳປີ 2023 ແມ່ນເຫັນວ່າ: ບໍລິສັດ ວຈຊຕ ໄດ້ຄະແນນທັງໝົດ 54.82 ຄະແນນ ຈັດເປັນ ປະເພດ ປານກາງ ມີລາຍລະອຽດເພີ່ມເຕີມດັ່ງນີ້:

ພາກ	ຄະແນນສະເລ່ຍ	ຄະແນນຕົວຈິງ
ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ	10	6.67
ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ	10	5.45
ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ	40	23.78
ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ	40	18.92
ລວມ	**100**	**54.82**


1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ປະຕິບັດໄດ້ 6.67 ຄະແນນ;
2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ປະຕິບັດໄດ້ 5.45 ຄະແນນ;
3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ປະຕິບັດໄດ້ 23.78 ຄະແນນ ແລະ
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ປະຕິບັດໄດ້ 18.92 ຄະແນນ.

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ

ການໃຫ້ຄະແນນ ປະກອບມີ 3 ປະເພດ ເຊັ່ນ: FA (Fully Applied) - ປະຕິບັດໄດ້ທັ້ງໝົດ = 1 ຄະແນນ, PA (Partial Applied) - ປະຕິບັດໄດ້ບາງສ່ວນ = 0.5 ຄະແນນ ແລະ NA (Not Applied) - ບໍ່ສາມາດປະຕິບັດໄດ້ = 0 ຄະແນນ, ບໍລິສັດ ວຈຊຕ ສາມາດປະຕິບັດໄດ້ ດັ່ງນີ້:

ວຈຊຕ	ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ		ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ		ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ		ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ		ລວມ	
	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%
ປະຕິບັດໄດ້ທັ້ງໝົດ	6	40%	3	27%	19	51%	14	38%	42	42%
ປະຕິບັດໄດ້ບາງສ່ວນ	8	53%	6	55%	6	16%	7	19%	27	27%
ບໍ່ສາມາດປະຕິບັດໄດ້	1	7%	2	18%	12	32%	16	43%	31	31%
ລວມ	**15**	**100%**	**11**	**100%**	**37**	**100%**	**37**	**100%**	**100**	**100%**

ຈາກຂໍ້ມູນຂ້າງເທິງນີ້ ແມ່ນເຫັນໄດ້ວ່າ ວຈຊຕ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານໄດ້ທັ້ງໝົດ 42%, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ 27% ແລະ ບໍ່ສາມາດປະຕິບັດໄດ້ 31% ຂອງ ຄຳຖາມທັ້ງໝົດ. ຜົນການປະເມີນຂ້າງເທິງ ສາມາດສະທ້ອນຜ່ານເສັ້ນສະແດງ ດັ່ງນີ້:



3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ບໍລິສັດ ວຈຊຕ ສາມາດປະຕິບັດໄດ້ທັງໝົດ (FA) 40%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA) 53% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 7% ຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ການຈັດກອງປະຊຸມຜູ້ຖືຮຸ້ນ: ບໍລິສັດ ວຈຊຕ ໄດ້ສົ່ງໜັງສືແຈ້ງເຊີນໃຫ້ແກ່ຜູ້ຖືຮຸ້ນ ພ້ອມທັງຄັດຕິດເອກະສານສຳຄັນກ່ອນກອງປະຊຸມຜູ້ຖືຮຸ້ນ ພ້ອມນັ້ນ, ກໍໄດ້ແຈ້ງຂັ້ນຕອນວິທີການລົງຄະແນນສຽງ ແລະ ຜົນຂອງການລົງຄະແນນໃນແຕ່ລະວາລະ ລວມເຖິງການໃຫ້ສິດແກ່ຜູ້ຖືຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງປະຊຸມຜູ້ຖືຮຸ້ນ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍໜັງສືເຊີນເຂົ້າຮ່ວມກອງປະຊຸມສາມັນ ແລະ ວິສາມັນຜູ້ຖືຮຸ້ນ ທັນຕາມລະບຽບການ. - ບໍລິສັດ ວຈຊຕ ໄດ້ມີການແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. - ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນກ່ຽວກັບອາຍຸ ປະສົບການ ແລະ ການດຳລົງຕຳແໜ່ງ, ວຸດທິການສຶກສາ ກ່ອນກອງປະຊຸມຜູ້ຖືຮຸ້ນ.	- ບໍລິສັດ ວຈຊຕ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ວຈຊຕ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ວຈຊຕ ຍັງບໍ່ໄດ້ກຳນົດເຫດການກ່ຽວກັບການລົງທຶນ, ການຊື້-ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ ແລະ ການອອກຈຳ

- ຜູ້ອຳນວຍການໃຫຍ່ ແລະ ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ.	ໜ່າຍຮຸ້ນໃໝ່ ແລະ ເຫດການອື່ນໆທີ່ສຳຄັນ ຊຶ່ງຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ

ບໍລິສັດ ວຈຊຕ ສາມາດປະຕິບັດໄດ້ທັງໝົດ (FA) 27%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA) 55% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 18% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ວຈຊຕ ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນ ເພື່ອຮັບຄຳເຫັນ ຫຼື ຮ້ອງຮຽນ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ກ່ຽວກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກເຂົາ ໄວ້ໃນເວັບໄຊ ຫຼື ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ. - ບໍລິສັດ ວຈຊຕ ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຮ້ອງຮຽນ ຂອງພະນັກງານ ຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍ ຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງ ບໍລິສັດ. - ສະພາບໍລິຫານ ໄດ້ກຳນົດນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຟ້ອງ ກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ແລະ ກົດໝາຍຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງບໍລິສັດ.	- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍດ້ານຄວາມປອດໄພ, ສະຫວັດດີການສັງຄົມ, ການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ ໃຫ້ແກ່ພະນັກງານຕົນເອງ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໃນກົດລະບຽບກ່ຽວກັບຈັນຍາບັນຂອງ ບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍການພົວພັນຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນການຢູ່. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້.

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ບໍລິສັດ ວຈຊຕ ສາມາດປະຕິບັດໄດ້ທັງໝົດ (FA) ຄິດເປັນ 51%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA) 16% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 32% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ວຈຊຕ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລັກສະນະ, ມູນຄ່າ ແລະ ລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ພ້ອມທັງ ສາຍພົວພັນຂອງຜູ້ກ່ຽວຕໍ່ລາຍການທີ່ກ່ຽວພັນ ໃນເອກະສານລາຍງານການເງິນຂອງບໍລິສັດ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍກ່ຽວກັບ ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງບໍລິສັດ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍ ຂໍ້ມູນທາງການເງິນ, ຂໍ້ມູນທີ່ບໍ່ແມ່ນການເງິນ, ປະຫວັດການສຶກສາ ແລະ ການຝຶກອົບຮົມຂອງສະມາຊິກສະພາບໍລິຫານ, ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານໃນ ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການປ່ຽນແປງ ຫຼື ເຫດການທີ່ສຳຄັນທີ່ເກີດຂຶ້ນພາຍໃນປີໃນ ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍຂໍ້ມູນກ່ຽວກັບພະນັກງານຮັບຜິດຊອບຕິດຕໍ່ພົວພັນກັບນັກລົງທຶນ (ນັກລົງທຶນສຳພັນ) ໃນເວັບໄຊຂອງບໍລິສັດ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳໄຕມາດ 1 ແລະ ໄຕມາດ 3 ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ. - ບໍລິສັດ ວຈຊຕ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກຜູ້	- ບໍລິສັດ ວຈຊຕ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນຂັ້ນຕອນການພິຈາລະນາ ແລະ ການອະນຸມັດລາຍການທີ່ກ່ຽວພັນ (RPTs) ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ວຈຊຕ ບໍ່ໄດ້ເປີດເຜີຍຂໍ້ມູນລະອຽດກ່ຽວກັບກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມຂອງຕົນ (ຖ້າມີ ຫຼື ບໍ່ມີກໍ່ຕາມ) ແລະ ຂໍ້ມູນກ່ຽວກັບປັດໄຈຄວາມສ່ຽງຂອງບໍລິສັດໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນ ທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. - ບໍລິສັດ ວຈຊຕ ບໍ່ໄດ້ລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ. - ບໍລິສັດ ວຈຊຕ ບໍ່ໄດ້ເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບເອກະສານລາຍງານການເງິນ ແລະ ຄ່າບໍລິການອື່ນທີ່ບໍ່ແມ່ນກວດສອບ ຂອງແຕ່ລະປີ. - ບໍລິສັດ ວຈຊຕ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ເອກະສານລາຍງານການເງິນປະຈຳໄຕມາດ/ປະຈຳປີ, ບົດລາຍງານການເຄື່ອນໄຫວທຸລະກິດປະຈຳ 6 ເດືອນຕົ້ນປີ/ປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບໄຊ້ຂອງບໍລິສັດ ຢ່າງປົກກະຕິ. - ບໍລິສັດ ວຈຊຕ ບໍ່ໄດ້ເປີດເຜີຍຂໍ້ມູນນະໂຍບາຍປັນຜົນ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ. - ບໍລິສັດ ວຈຊຕ ບໍ່ສ້າງ ແລະ ເປີດເຜີຍຂໍ້ມູນກ່ຽວກັບມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່.

ກວດສອບພາຍນອກ ພາຍໃນ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ. - ບໍລິສັດ ຈຈຊຕ ໄດ້ເປີດເຜີຍມະຕິກອງປະຊຸມຜູ້ຖືຮຸ້ນ ພາຍໃນກຳນົດເວລາ 24 ຊົ່ວໂມງ ນັບແຕ່ວັນສຳເລັດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ. - ບໍລິສັດ ຈຈຊຕ ໄດ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານ ແລະ ຜູ້ຮັບຜິດຊອບວຽກງານເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ.	- ບໍລິສັດ ຈຈຊຕ ບໍ່ໄດ້ສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບ ການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບ ຜ່ານທາງເວັບໄຊຂອງບໍລິສັດ. - ບໍລິສັດ ຈຈຊຕ ບໍ່ໄດ້ເປີດເຜີຍນະໂຍບາຍກ່ຽວກັບຄ່າຕອບແທນ ແລະ ມູນຄ່າລວມທັງໝົດ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ຈຈຊຕ ບໍ່ ໄດ້ເປີດເຜີຍຄ່າຕອບແທນຂອງສະມາຊິກສະພາບໍລິຫານແຕ່ລະທ່ານ ໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ຈຈຊຕ ສາມາດປະຕິບັດໄດ້ທັງໝົດ (FA) 38%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA 19% ແລະ ບໍ່ສາມາດປະຕິບັດໄດ້ (NA) 43% ຂອງຄຳຖາມໃນພາກນີ້ ຊຶ່ງມີລາຍລະອຽດ ລຸ່ມນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ຈຈຊຕ ມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ໃນນັ້ນ, ປະກອບດ້ວຍສະມາຊິກສະພາບໍລິຫານເພດຍິງອີກດ້ວຍ. - ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. - ສະພາບໍລິຫານ ປະກອບມີສະມາຊິກທັງໝົດ 11 ທ່ານ ແລະ ໃນນີ້ສະມາຊິກອິດສະຫຼະມີ 04 ທ່ານ (ຫຼາຍກວ່າ 1/3 ຂອງສະມາຊິກສະພາບໍລິຫານທັງໝົດ). - ສະມາຊິກສະພາບໍລິຫານແຕ່ລະຄົນ ໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການກ່ອນການປະຊຸມ. - ກົດລະບຽບຂອງ ບໍລິສັດ ຈຈຊຕ ໄດ້ກຳນົດຈະແຈ້ງກ່ຽວກັບເງື່ອນໄຂ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ.	- ບໍລິສັດ ຈຈຊຕ ຍັງບໍ່ໄດ້ກຳນົດເງື່ອນໄຂ, ມາດຕະຖານການເປັນສະມາຊິກສະພາບໍລິຫານ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກອິດສະຫຼະ, ຕ້ອງມີຈຳນວນສະມາຊິກເພດຍິງ ຢ່າງໜ້ອຍ 1 ທ່ານ, ມີອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ວິທີການເຮັດວຽກ ລວມໄປເຖິງນະໂຍບາຍກຳນົດຄ່າຕອບແທນຕ່າງໆ ຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ໄວ້ໃນລະບຽບພາຍໃນບໍລິສັດ ຕາມຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ. - ປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ພ້ອມນັ້ນສະພາບໍລິຫານ ບໍ່ໄດ້ຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າສະມາຊິກອິດສະຫຼະ. - ກົດລະບຽບກ່ຽວກັບສະພາບໍລິຫານບໍ່ໄດ້ເຜີຍແຜ່ຜ່ານເວັບໄຊຂອງບໍລິສັດ. - ປະທານຄະນະກຳມະການກວດສອບ, ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ, ປະທານຄະນະກຳມະການຄັດ

- ສະພາບໍລິຫານໄດ້ມີການຈັດກອງປະຊຸມຢ່າງໜ້ອຍ 4 ຄັ້ງ ຕໍ່ປີ ແລະ ສະມາຊິກແຕ່ລະທ່ານໄດ້ເຂົ້າຮ່ວມກອງປະຊຸມ ສະພາບໍລິຫານຢ່າງໜ້ອຍ 3/4 ຂອງກອງປະຊຸມທັງໝົດ. - ສະພາບໍລິຫານຍັງໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ພະນັກງານ ທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບທິດທາງແຜນຍຸດ ທະສາດຂອງບໍລິສັດ. - ສະພາບໍລິຫານໄດ້ມີການແຕ່ງຕັ້ງ ຄະນະກຳມະການກວດ ສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະ ການຄັດເລືອກ ແລະ ຄະນະກຳມະການກຳນົດຜົນຕອບ ແທນ ຢ່າງຄົບຖ້ວນ. - ສະພາບໍລິຫານໄດ້ສ້າງ ແລະ ເປີດເຜີຍແຜນສືບທອດ ພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະ ອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ. - ສະພາບໍລິຫານໄດ້ປະເມີນຜົນການເຄື່ອນໄຫວວຽກງານ ຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະ ກຳມະການຂອງສະພາບໍລິຫານປະຈຳປີ.	ເລືອກ, ປະທານຄະນະກຳມະການກຳນົດຄ່າຕອບແທນ ບໍ່ ແມ່ນສະມາຊິກອິດສະຫຼະ. - ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການ ຄັດເລືອກ, ຄະນະກຳມະການກຳນົດຄ່າຕອບແທນ ບໍ່ໄດ້ຈັດ ກອງປະຊຸມຄະນະກຳມະການຂອງຕົນ ຄົບຖ້ວນລະບຽບ ການທີ່ກ່ຽວຂ້ອງ. - ບໍລິສັດ ອຈຊຕ ບໍ່ໄດ້ສ້າງ ແລະ ຮັບຮອງລະບຽບພາຍໃນ ກ່ຽວກັບຄະນະກຳມະການສະພາບໍລິຫານຕ່າງໆ ເປັນຕົ້ນ ສິດ, ໜ້າທີ່, ຄວາມຮັບຜິດຊອບ, ມາດຕະຖານ ແລະ ເງື່ອນໄຂການເປັນສະມາຊິກ, ຂັ້ນຕອນ ແລະ ວິທີການເຮັດ ວຽກ ລວມໄປເຖິງນະໂຍບາຍກຳນົດຄ່າຕອບແທນຕ່າງໆ ແລະ ຂອງຄະນະກຳມະການ ແລະ ອື່ນໆ ພ້ອມນັ້ນ, ຍັງບໍ່ ໄດ້ເປີດເຜີຍຜ່ານເວັບໄຊຂອງບໍລິສັດ. - ຄະນະກຳມະການຄຸ້ມຄອງຄວາມສ່ຽງ ບໍ່ໄດ້ສ້າງ ແລະ ຄຸ້ມ ຄອງຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ. - ສະພາບໍລິຫານບໍ່ໄດ້ຮັບຮອງແຜນການຈັດກອງປະຊຸມຂອງ ສະພາບໍລິຫານ ທີ່ກວມເອົາວັນເວລາຈັດຕັ້ງກອງປະຊຸມ ສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື. - ສະພາບໍລິຫານ ບໍ່ໄດ້ກຳນົດອົງປະຊຸມຂອງກອງປະຊຸມສະພາ ບໍລິຫານ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ ໄວ້ໃນລະບຽບການສະເພາະຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍມາດຖານ, ຂັ້ນ ຕອນ ແລະ ເງື່ອນໄຂ ການປະເມີນຜົນການເຄື່ອນໄຫວ ວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາ ບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດ ລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

4. ສິ່ງທີ່ຕ້ອງໄດ້ປັບປຸງ

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ບໍລິສັດ ອຈຊຕ ຕ້ອງແກ້ໄຂບັນຫາທີ່ຍັງຄົງຄ້າງ ດັ່ງນີ້:

- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ຄວນໄດ້ຮັບສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ກຳນົດເຫດການຕ່າງໆ ທີ່ຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ ການອອກຈຳໜ່າຍຮຸ້ນໃໝ່, ການລົງທຶນ ຊື້ ຂາຍ, ໂອນ ຊັບສິນທີ່ມູນຄ່າກວມເອົາ 50% ຂຶ້ນໄປ ຂອງຊັບສິນທັງໝົດຂອງບໍລິສັດ ແລະ ລາຍການທີ່ກ່ຽວພັນອື່ນໆ ໄວ້ໃນລະບຽບພາຍໃນຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ, ນະໂຍບາຍຄວາມປອດໄພ ແລະ ສະຫວັດດີການຂອງພະນັກງານ,ນະໂຍບາຍການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ, ນະໂຍບາຍກ່ຽວກັບການພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ, ນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ, ນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ, ນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້;
- ສະພາບໍລິຫານ ຄວນກຳນົດເງື່ອນໄຂ, ມາດຕະຖານຂອງການເປັນສະມາຊິກສະພາບໍລິຫານ, ໂຄງປະກອບບຸກຄະກອນສະພາບໍລິຫານຕ້ອງປະກອບສະມາຊິກອິດສະຫຼະ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກສະພາບໍລິຫານເພດຍິງ, ອາຍຸການດຳລົງຕຳແໜ່ງ ຫຼື ຜົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ແຜນວິທີການເຮັດວຽກ, ນະໂຍບາຍກຳນົດຄ່າຕອບແທນຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ຕາມຫຼັກການຄຸ້ມຄອງບໍລິຫານ ທີ່ກຳນົດໄວ້ໃນຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ;
- ຄວນສ້າງລະບຽບສະເພາະຂອງຄະນະກຳມະການຕ່າງໆຂອງສະພາບໍລິຫານ ເປັນຕົ້ນສິດ, ໜ້າທີ່, ຄວາມຮັບຜິດຊອບ, ໂຄງປະກອບບຸກຄະລາກອນ, ມາດຕະຖານ ແລະ ເງື່ອນໄຂການເປັນສະມາຊິກຄະນະກຳມະການ, ຂັ້ນຕອນ ແລະ ວິທີການເຮັດວຽກ ລວມໄປເຖິງນະໂຍບາຍກຳນົດຄ່າຕອບແທນຕ່າງໆ ຂອງຄະນະກຳມະການ ແລະ ອື່ນໆ ພ້ອມທັງສະເໜີໃຫ້ສະພາບໍລິຫານຂອງບໍລິສັດ ພິຈາລະນາ ແລະ ຮັບຮອງເອົາ;
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຄວນສ້າງ ແລະ ຄຸ້ມຄອງ ຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ບໍລິສັດ ຈຊຕ ຄວນເພີ່ມຄວາມເອົາໃຈໃສ່ ດັ່ງນີ້:

- ຄວນເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນ ຂັ້ນຕອນການພິຈາລະນາ ແລະ ການອະນຸມັດລາຍການທີ່ກ່ຽວພັນ (RPTs) ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ຄວນເປີດເຜີຍຂໍ້ມູນລະອຽດກ່ຽວກັບ ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມ ຂອງຕົນ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ (ຖ້າມີ ຫຼື ບໍ່ມີກໍ່ຕາມ);

- ຄວນເປີດເຜີຍຂໍ້ມູນກ່ຽວກັບ ລາຍການທີ່ກ່ຽວພັນ, ນະໂຍບາຍການກຳນົດຄ່າຕອບແທນ ແລະ ມູນຄ່າລວມ ຂອງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແຕ່ລະປີ ໃນບົດລາຍການເຄື່ອນໄຫວທຸລະກິດປະຈຳປີ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນ, ເງື່ອນໄຂ ແລະ ການ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່;
- ຄວນລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ;
- ຄວນເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບ ແລະ ຄ່າບໍລິການອື່ນທີ່ບໍ່ຂອງ ການກວດສອບທີ່ບໍ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ;
- ຄວນເປີດເຜີຍລະບຽບການສະເພາະຂອງຄະນະກຳມະການຕ່າງໆຂອງສະພາບໍລິຫານໃຫ້ມວນຊົນຮັບຊາບຜ່ານ ເວັບໄຊຂອງບໍລິສັດ;
- ຄວນເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ;
- ຄວນເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນ ທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳ ນວຍການ;
- ຄວນເປີດເຜີຍຂໍ້ມູນກ່ຽວກັບເອກະສານລາຍງານການເງິນປະຈຳໄຕມາດ/ປະຈຳປີ, ບົດລາຍງານການເຄື່ອນໄຫວ ທຸລະກິດປະຈຳ 6 ເດືອນຕົ້ນປີ/ປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບ ໄຊ້ຂອງບໍລິສັດ ຢ່າງປົກກະຕິ;
- ສະພາບໍລິຫານຄວນຮັບຮອງແຜນຈັດກອງປະຊຸມຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ ກ່ອນເອົາ ວັນຈັດກອງປະຊຸມ ແລະ ວາລະທີ່ຈະນຳມາປຶກສາຫາຫາລື;
- ຄວນເປີດເຜີຍກິດລະບຽບຂອງສະພາບໍລິຫານໃນເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ;
- ສະພາບໍລິຫານ ແລະ ຄະນະກຳມະການສະພາບໍລິຫານ ຄວນຈັດກອງປະຊຸມສອດຄ່ອງຕາມລະບຽບການທີ່ ກ່ຽວຂ້ອງ ພ້ອມນັ້ນ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການ ຄວນເຂົ້າຮ່ວມກອງປະຊຸມດັ່ງກ່າວ ເປັນ ປົກກະຕິ;
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ;
- ສະພາບໍລິຫານຄວນເປີດເຜີຍມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກ ງານຂອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານໃນບົດ ລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

ຜູ້ອຳນວຍການໃຫຍ່ ຕລຊລ

ສຸພັກ ຖິ່ນໄຊພອນ